# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 5
## Investment policies
## ນະໂຍບາຍສົ່ງເສີມການລົງທຶນ

**1. ນະໂຍບາຍສົ່ງເສີມການລົງທຶນຢູ່ ສປປ ລາວ**

ລັດຖະບານ ແຫ່ງ ສປປ ລາວ ໄດ້ມີນະໂຍບາຍຢ່າງຈະແຈ້ງໃນການສົ່ງເສີມທຸກພາກສ່ວນເສດຖະກິດທັງພາຍໃນແລະຕ່າງປະເທດ ຊຶ່ງມັນສະແດງອອກດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອໍານວຍຄວາມສະດວກຕ່າງໆ ເປັນຕົ້ນການສ້າງພື້ນຖານໂຄງລ່າງ, ການສະໜອງຂໍ້ມູນຂ່າວສານທີ່ຈໍາເປັນ, ການໃຫ້ນະໂຍບາຍດ້ານແຮງງານ, ດ້ານພາສີ, ສ່ວຍສາອາກອນ, ການເຂົ້າເຖິງແຫຼ່ງທຶນ, ການນໍາໃຊ້ທີ່ດິນ, ການປະຕິບັດຄວາມສະເໝີພາບລວມທັງຄວາມຮັບຮູ້, ການປົກປ້ອງກໍາມະສິດດ້ານການນໍາໃຊ້, ດ້ານໝາກຜົນ, ສິດສືບທອດ, ສິດໂອນ ແລະ ສິດອື່ນໆຕາມລັດຖະທໍາມະນູນ ແລະ ກົດໝາຍຂອງ ສປປ ລາວ. ທຸກກິດຈະການທີ່ບໍ່ແຕະຕ້ອງເຖິງ: ຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ວັດທະນະທໍາຂອງຊາດ ລັດລ້ວນແຕ່ສົ່ງເສີມ, ການສົ່ງເສີມໄດ້ມີຫຼັກການກໍານົດຢ່າງລະອຽດໃນກົດໝາຍສົ່ງເສີມການລົງທຶນປີ 2016[1].

ລັດຖະບານໄດ້ວາງນະໂຍບາຍສົ່ງເສີມການລົງທຶນຜ່ານກົດໝາຍ ແລະ ນິຕິກໍາຕ່າງໆ, ສ້າງສະພາບແວດລ້ອມ, ເງື່ອນໄຂເອື້ອອໍານວຍທີ່ດີ ເພື່ອກະຕຸກຊຸກຍູ້ດຶງດູດ ແລະ ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໃຫ້ຂະຫຍາຍຕົວຂຶ້ນເປັນກ້າວໆ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມຢູ່ ສປປ ລາວ.

ສໍາລັບ ສປປ ລາວ ແລ້ວ ນະໂຍບາຍສົ່ງເສີມການລົງທຶນໄດ້ແບ່ງອອກເປັນ 3 ປະເພດຄື:ນະໂຍບາຍສົ່ງເສີມ ການລົງທຶນຕາມຂະແໜງການ, ນະໂຍບານສົ່ງເສີມການລົງທຶນຕາມເຂດ, ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ, ສ່ວຍສາອາກອນ, ການນໍາໃຊ້ທີ່ດິນ ແລະ ອື່ນໆ.

**2. ນະໂຍບາຍສົ່ງເສີມການລົງທຶນຕາມຂະແໜງການ**

ນະໂຍບາຍສົ່ງເສີມການລົງທຶນ ຕາມຂະແໜງການ ແມ່ນນະໂຍບາຍ ທີ່ລັດຖະບານເລັງໃສ່ ເພື່ອຊຸກຍູ້ໃຫ້ຜູ້ລົງທຶນ ຫຼື ດຶງດູດໃຫ້ຜູ້ລົງທຶນມີການລົງທຶນໃນຂະແໜງການທີ່ເຫັນວ່າມັນມີຄວາມຈໍາເປັນ ແລະ ສໍາຄັນຕໍ່ສະພາບການພັດທະນາພາຍໃນປະເທດໃນຍຸກປັດຈຸບັນ ແລະ ອີງໃສ່ສະພາບການພັດທະນາເສດຖະກິດ-ສັງຄົມພາຍໃນປະເທດ, ຊຶ່ງລັດຖະບານຈະເປັນຜູ້ກໍານົດບັນຊີວ່າ ບັນດາກິດຈະການຕາມຂະແໜງ ການລົງທຶນ ໃດທີ່ຈໍາເປັນຕ້ອງໄດ້ຮັບ ການ

[1] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທີ I , ມາດຕາ 5

ສົ່ງເສີມ (ລາຍລະອຽດໄດ້ກຳນົດໄວ້ໃນກົດໝາຍສົ່ງເສີມການລົງທຶນປີ 2016 )[2] ໃນຈຳນວນບັນຊີດັ່ງກ່າວ ນັ້ນ, ສິ່ງທີ່ຄວນເອົາໃຈໃສ່ແມ່ນທຸລະກິດຂະໜາດນ້ອຍ-ຂະໜາດກາງທີ່ມີທຶນ ແລະ ແຮງງານຕໍ່າກວ່າຕາມທີ່ໄດ້ກຳ ນົດໄວ້ໃນກົດໝາຍສົ່ງເສີມການລົງທຶນປີ 2016 "ກະສິກຳສະອາດ, ປອດສານພິດ, ການຜະລິດແນວພັນພືດ, ແນວພັນສັດ, ການປູກພືດອຸດສາຫະກຳ, ການພັດທະນາປ່າໄມ້, ປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນານາພັນ, ກິດຈະການສົ່ງເສີມການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ"[3] ຈະໄດ້ຮັບນະໂຍບາຍລະອຽດຕາມ ຂະແໜງການທີ່ກ່ຽວຂ້ອງ.

ຂະແໜງການທີ່ໄດ້ຮັບການສົ່ງເສີມການລົງທຶນສາມາດແບ່ງອອກເປັນ 3 ລະດັບຄື:

+ ລະດັບ1: ແມ່ນບັນດາກິດຈະການທີ່ຈະໄດ້ຮັບການສົ່ງເສີມສູງສຸດ.

+ ລະດັບ 2: ແມ່ນບັນດາກິດຈະການທີ່ຈະໄດ້ຮັບການສົ່ງເສີມປານກາງ.

+ ລະດັບ 3: ແມ່ນບັນດາກິດຈະການທີ່ຈະໄດ້ຮັບການສົ່ງເສີມຕໍ່າ.

ອາດເວົ້າໄດ້ວ່າ ຂະແໜງການທີ່ຈະໄດ້ຮັບການສົ່ງເສີມມີຂະແໜງກະສິກຳ, ອຸດສາຫະກຳ, ຫັດຖະກຳ ແລະ ການບໍລິການຊຶ່ງແມ່ນລັດຖະບານເປັນຜູ້ກຳນົດບັນຊີລະອຽດຂອງບັນດາກິດຈະການໃນຂະແໜງການດັ່ງກ່າວເປັນ 3 ລະດັບຕາມທີ່ໄດ້ເວົ້າມາຂ້າງເທິງນີ້ ໂດຍອີງໃສ່ກິດຈະການບູລິມະສິດຂອງລັດຖະບານ ເປັນກິດຈະການທີ່ຕິດພັນກັບ ການແກ້ໄຂຄວາມທຸກຍາກ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ, ການສ້າງພື້ນຖານໂຄງລ່າງ, ການພັດທະນາຊັບພະຍາກອນມະນຸດ, ການສ້າງວຽກເຮັດງານທຳ ແລະ ອື່ນໆ.

## 3. ນະໂຍບາຍສົ່ງເສີມການລົງທຶນຕາມເຂດ ແລະ ຕາມລະດັບ

ເງື່ອນໄຂການໃຫ້ນະໂຍບາຍສົ່ງເສີມທາງດ້ານການລົງທຶນປະກອບມີຫຼາຍດ້ານ ແຕ່ຫຼັກໆແມ່ນທາງດ້ານອາກອນເຊິ່ງຂຶ້ນກັບເຂດສົ່ງເສີມການລົງທຶນ ແລະ ກິດຈະການສົ່ງເສີມການລົງທຶນ ໂດຍນະໂຍບາຍທາງດ້ານອາກອນນັ້ນໄດ້ແບ່ງອອກເປັນ 3 ເຂດ ແລະ 3 ລະດັບຄື:

**+ 3 ເຂດ:**

- ເຂດທີ **I:** ເຂດພູດອຍ, ພູພຽງ ທີ່ບໍ່ມີໂຄງລ່າງພື້ນຖານທາງດ້ານເສດຖະກິດ ເພື່ອສ້າງສິ່ງອຳນວຍຄວາຍສະດວກຂຶ້ນ;

- ເຂດທີ **II:** ເຂດພູດອຍ, ພູພຽງ ທີ່ມີໂຄງລ່າງພື້ນຖານທາງດ້ານເສດຖະກິດໃນລະດັບປານກາງ ທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ;

- ເຂດທີ **III:** ເຂດພູພຽງ ທີ່ມີໂຄງລ່າງພື້ນຖານທາງດ້ານເສດຖະກິດດີ ທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ.

**+ 3 ລະດັບ:**

- ລະດັບທີ 1: ໃຫ້ນະໂຍບາຍສູງສຸດ;

---

[2] ກົດໝາຍສົ່ງເສີມການລົງທຶນ, ພາກທີ II, ໝວດທີ 1, ມາດຕາ 9

[3] ກົດໝາຍສົ່ງເສີມການລົງທຶນປີ 2016, ວັກທີ 2 ຂອງມາດຕາ 9

- ລະດັບທີ 2: ໃຫ້ນະໂຍບາຍສົ່ງເສີມປານກາງ;

- ລະດັບທີ 3: ໃຫ້ນະໂຍບາຍສົ່ງເສີມຕໍ່າ.

**+ ໄລຍະຍົກເວັ້ນອາກອນກຳໄລ:**

| ເຂດສົ່ງເສີມການລົງທຶນ | ລະດັບສົ່ງເສີມ | ໄລຍະຍົກເວັ້ນ (ປີ) |
|---|---|---|
| 1 | 1 | 10 |
| | 2 | 6 |
| | 3 | 4 |
| 2 | 1 | 6 |
| | 2 | 4 |
| | 3 | 2 |
| 3 | 1 | 4 |
| | 2 | 2 |
| | 3 | 1 |

ພິເສດ: ການລົງທຶນທີ່ນອນຢູ່ໃນຂະແໜງການສຶກສາ ແລະ ສາທາລະນະສຸກແມ່ນຈະໄດ້ຮັບສິດທິພິເສດຄື: ຍົກເວັ້ນຄ່າເຊົ່າ ຫຼື ສຳປະທານທີ່ດິນລັດ: ເຂດ 1 ເປັນເວລາ 15 ປີ, ເຂດ 2 ເປັນເວລາ 10 ປີເຂດ 3 ເປັນເວລາ 3 ປີ ໄດ້ຮັບການຍົກເວັ້ນອາກອນກຳໄລອີກ 5 ປີ ຢູ່ແຕ່ລະເຂດຂອງການລົງທຶນ.

ເພື່ອສ້າງຄວາມສົມດຸນ ໃນການພັດທະນາ ທັງເປັນການຂະຫຍາຍພື້ນຖານການພົວພັນດ້ານການລົງທຶນລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມເທົ່າທຽມກັນ ເພື່ອຈຳກັດຄວາມແຕກໂຕນໃນການພັດທະນາ, ສ້າງຄວາມເທົ່າທຽມກັນດ້ານການລົງທຶນ, ກົດໝາຍສົ່ງເສີມການລົງທຶນປີ 2016 ກໍໄດ້ກຳນົດເຂດສົ່ງເສີມການລົງທຶນແຕ່ລະ ເຂດຢ່າງຈະແຈ້ງ, ໂດຍອີງຕາມພື້ນຖານໂຄງລ່າງ, ເສດຖະກິດ-ສັງຄົມ ແລະ ພູມີປະເທດ, ຊຶ່ງຕາມກົດໝາຍສົ່ງເສີມ ການລົງທຶນປີ 2009 ໄດ້ແບ່ງອອກເປັນ 3 ເຂດຕົ້ນຕໍຄື: (1). ເຂດທີ່ພັດທະນາຍາກ, (2). ເຂດທີ່ພັດທະນາຍາກ ປານກາງ, (3). ເຂດທີ່ມີຄວາມສະດວກໃນການພັດທະນາ. ລາຍລະອຽດກຳນົດໃນກົດໝາຍສົ່ງເສີມການລົງທຶນ ສະບັບປີ 2009[4], ໃນກົດໝາຍສົ່ງເສີມການລົງທຶນປີ 2016 ກໍກຳນົດນະໂຍບາຍສົ່ງເສີມການລົງທຶນຕາມເຂດ ອອກເປັນ 3 ເຂດ ເຊັ່ນກັນແຕ່ໄດ້ລະບຸກະທັດຮັດ ແລະ ລະອຽດກວ່າເກົ່າຄື: (1). ເຂດ 1: ເປັນເຂດທຸກຍາກ, ຫ່າງໄກສອກຫຼີກ, ພື້ນຖານໂຄງລ່າງ, ເສດຖະກິດ-ສັງຄົມບໍ່ເອື້ອອຳນວຍແກ່ການລົງທຶນ; (2). ເຂດ 2: ແມ່ນເຂດທີ່ມີພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມເອື້ອອຳນວຍແກ່ການລົງທຶນ; (3). ເຂດເສດຖະກິດພິເສດ.

ບັນດາເຂດສົ່ງເສີມທີ່ກ່າວມາຂ້າງເທິງນັ້ນ ລັດຖະບານຈະກຳນົດ ໃຫ້ມີນະໂຍບາຍແຕກຕ່າງກັນ, ເຂດທີ່ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ທີ່ຍັງບໍ່ທັນອຳນວຍຄວາມສະດວກແກ່ການລົງທຶນ ແລະ ພູມີປະເທດ ສ່ວນໃຫຍ່ ເປັນເຂດພູດອຍ ຫ່າງໄກສອກຫລີກ, ເຂດດັ່ງກ່າວຈະໄດ້ຮັບການສົ່ງເສີມການລົງທຶນ ໃນລະດັບສູງສຸດ; ເຂດທີ່ມີພື້ນ ຖານ

[4] ກົດໝາຍສົ່ງເສີມການລົງທຶນປີ 2009, ພາກທີ V, ໝວດທີ 1, ມາດຕາ 50

ໂຄງລ່າງເສດຖະກິດ-ສັງຄົມ ທີ່ສາມາດອຳນວຍຄວາມສະດວກແກ່ການລົງທຶນໄດ້ສ່ວນໃດສ່ວນໜຶ່ງ ແລະ ພູມີ ປະເທດ ບໍ່ທຸລະກັນດານເທົ່າກັບເຂດ 1, ເຂດດັ່ງກ່າວ ຈະໄດ້ຮັບການສົ່ງເສີມການລົງທຶນ ໃນລະດັບກາງ; ເຂດ3 ປະຕິບັດຕາມ ລະບຽບການສະເພາະ, ເພາະມັນຕິດພັນກັບກິດຈະການ ສຳປະທານ,ໂດຍອີງຕາມສັນຍາທີ່ບໍ່ຂັດກັບລັດ ຖະທຳມະນູນ ແລະ ກົດໝາຍຂອງ ສປປ ລາວ, ( ສັງເກດນະໂຍບາຍດ້ານອາກອນກຳໄລໃນກິດຈະການຕາມຂະ ແໜງການ ແລະ ເຂດ ທີ່ກຳນົດໄວ້ໃນກົດໝາຍສົ່ງເສີມການລົງທຶນປີ 2016 )[5]. ຊຶ່ງໃນນັ້ນຈະມີການຍົກເວັ້ນອາ ກອນກຳໄລ ທີ່ແຕກຕ່າງກັນ ແລ້ວແຕ່ລະດັບຄວາມສະດວກ ຫຼື ຫຍຸ້ງໃນການລົງທຶນແຕ່ລະເຂດ.

**<u>ໃສ່ໃຈ:</u>** ລັດຖະບານເປັນຜູ້ກຳນົດເຂດອີງໃສ່ສະພາບການຂະຫຍາຍຕົວທາງດ້ານເສດຖະກິດໃນແຕ່ລະໄລຍະ.

**4. ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ, ສ່ວຍສາອາກອນ, ການນຳໃຊ້ທີ່ດິນ ແລະ ອື່ນໆ**

ເພື່ອຈັດຕັ້ງຜັນຂະຫຍາຍບາງມາດຕາຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ແລະ ຜັນຂະຫຍາຍຄຳສັ່ງຊີ້ນຳຂອງນາຍົກລັດຖະມົນຕີ, ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ກ່ຽວກັບການປັບປຸງລະບຽບ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດຢູ່ ສປປ ລາວ, ເພື່ອແນໃສ່ແກ້ໄຂຄວາມທຸກຍາກ ທີ່ພົວພັນກັບຕົວຊີ້ວັດຄວາມສະດວກຂອງການດຳເນີນທຸລະກິດ ຢູ່ ສປປ ລາວ ແລະ ເຮັດໃຫ້ການຈັດຕັ້ງປະຕິບັດການໃຫ້ນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ, ຖືກຕ້ອງຕາມຂັ້ນຕອນ ແລະ ວິທີ ການດຳເນີນງານໃນການອະນຸມັດຮັບຮອງແຜນນຳເຂົ້າ ເພື່ອຮັບໃຊ້ວຽກງານກິດຈະການລົງທຶນ ແລະ ເພື່ອສ້າງ ເງື່ອນໄຂອຳນວຍຄວາມສະດວກແກ່ຜູ້ລົງທຶນຢູ່ ສປປ ລາວ ຄະນະກຳມະການສົ່ງເສີມການລົງທຶນ ແລະ ຄຸ້ມຄອງການ ລົງທຶນຂັ້ນສູນກາງ ໄດ້ອອກບົດແນະນຳ ສະບັບເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019 ວ່າດ້ວຍການໃຫ້ ນະໂຍບາຍສົ່ງເສີມການລົງທຶນດ້ານພາສີອາກອນ ແລະ ອາກອນມູນຄ່າເພີ່ມ ສຳລັບແຜນນຳເຂົ້າຂອງວິສາຫະກິດ.

**+ ນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ**

"ການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີອາກອນ ແລະ ອາກອນມູນຄ່າເພີ່ມໝາຍເຖິງການໃຫ້ ນະໂຍບາຍດ້ວຍການກຳນົດລາຍການສິນຄ້າທີ່ຈະນຳເຂົ້າຖາວອນ ແລະ ຊົ່ວຄາວ ທີ່ກຳນົດໃນແຜນນຳເຂົ້າ (Master list) ເພື່ອຮັບໃຊ້ວຽກງານການຜະລິດ ແລະ ພັດທະນາກິດຈະການລົງທຶນຂອງບັນດາວິສາຫະກິດທີ່ນອນໃນກິດຈະການ ສົ່ງເສີມການລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກິດຈະການລົງທຶນທີ່ມີສັນ ຍາກັບ ລັດຖະບານ"[6].

**+ ປະເພດຂອງການໃຫ້ນະໂຍບາຍດ້ານພາສີ ແລະ ອາກອນມູນຄ່າເພີ່ມ ປະກອບມີ**:

**1)** *ນະໂຍບາຍງົດເກັບພາສີ ແລະ ພັນທະອື່ນ*: ການນຳເຂົ້າວັດຖຸດິບ, ວັດຖຸອຸປະກອນ ແລະ ຊິ້ນສ່ວນປະກອບ ແລະ ເຄື່ອງຈັກຮັບໃຊ້ເພື່ອການຜະລິດແລ້ວສົ່ງອອກ 100%;

---

[5] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທີ II, ໝວດທີ 1, ມາດຕາ 11

[6] ບົດແນະນຳ ຂອງຄະນະກຳມະການສົ່ງເສີມການລົງທຶນ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ສະບັບເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019 ວ່າດ້ວຍການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີອາກອນ ແລະ ອາກອນມູນຄ່າເພີ່ມ ສຳລັບແຜນນຳເຂົ້າຂອງວິສາຫະກິດ.

**2)** ນະໂຍບາຍຍົກເວັ້ນພາສີ ແລະ ເສຍອາກອນມູນຄ່າເພີ່ມໃນອັດຕາສ່ວນ 0%: ການນຳເຂົ້າວັດສະດຸກໍ່ສ້າງ ແລະ ອຸປະກອນທີ່ມີມູນຄ່າພາຍໃນປະເທດ ຫຼື ບໍ່ສາມາດຈັດຊື້ໄດ້ພາຍໃນປະເທດ ຫຼື ມີແຕ່ບໍ່ພຽງພໍກັບຄວາມຕ້ອງການ ແມ່ນຈະໄດ້ຮັບອະນຸຍາດພຽງຄັ້ງດຽວ ໂດຍອີງໃສ່ໄລຍະເວລາໃນການກໍ່ສ້າງ ເພື່ອການກໍ່ສ້າງ ໂຮງງານ, ຕຶກອາຄານ ແລະ ສິ່ງປຸກສ້າງ ທີ່ເປັນຊັບສົມບັດຄົງທີ່ຂອງວິສາຫະກິດເທົ່ານັ້ນ ໂດຍອີງໃສ່ແບບ, ແຜນຜັງ, ໃບຄິດໄລ່ບໍລິມາດວຽກ ຂອງການກໍ່ສ້າງທີ່ຮັບຮອງຈາກຂະແໜງໂຍທາທິການ ແລະ ຂົນສົ່ງ; ການນຳເຂົ້າວັດຖຸດິບ, ວັດຖຸປະກອນ, ຊິ້ນສ່ວນ ປະກອບ ແລະ ເຄື່ອງຈັກທີ່ບໍ່ສາມາດສະໜອງ ຫຼື ຜະລິດໄດ້ໃນ ສປປ ລາວ ເພື່ອຮັບໃຊ້ການຜະລິດໂດຍກົງ, ສ່ວນ ການນຳເຂົ້າອຸປະກອນທີ່ບໍ່ໄດ້ຮັບໃຊ້ການຜະລິດໂດຍກົງ ແລະ ອາໄຫຼ່ເພື່ອມາປ່ຽນແທນແມ່ນຈະປະຕິບັດຕາມກົດໝາຍ ວ່າດ້ວຍພາສີ ແລະ ກົດໝາຍວ່າດ້ວຍອາ ກອນມູນຄ່າເພີ່ມ; ສຳລັບລົດບັດ (Bus) ທີ່ຮັບໃຊ້ວຽກງານບໍລິ ການທ່ອງທ່ຽວ ແລະ ຂົນສົ່ງຕ້ອງແມ່ນລົດໃໝ່ສະພາບ 100%, ແຕ່ສຳລັບພາຫະນະກົນຈັກໜັກແມ່ນລົດໃໝ່ ຫຼື ລົດ ທີ່ນຳໃຊ້ແລ້ວຕ້ອງມີອາຍຸການນຳໃຊ້ບໍ່ເກີນ 8 ປີ ຫຼື ຊົ່ວໂມງນຳໃຊ້ມາແລ້ວບໍ່ເກີນ 20.000 ຊົ່ວໂມງ, ພາຫະນະທີ່ໄດ້ ຮັບນະໂຍບາຍ ນຳເຂົ້າຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ້ອງໄດ້ນຳໃຊ້ເຂົ້າໃນວິສາຫະກິດຢ່າງຕ່ຳສຸດ 5 ປີ ຈຶ່ງສາມາດໃຫ້ມີການນຳເຂົ້າມາທົດແທນ ຫຼື ໂອນກຳມະສິດ, ແຕ່ກ່ອນຈະນຳເຂົ້າມາທົດແທນ ຫຼື ໂອນກຳມະສິດໄດ້ ພາຫະນະເກົ່າຕ້ອງໄດ້ເສຍພາສີ ແລະ ອາກອນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ສ່ວນການນຳເຂົ້າ ນ້ຳມັນ ເຊື້ອໄຟ, ອາຍແກັສ, ນ້ຳມັນຫຼໍ່ລື່ນ, ລົດຈິບ, ລົດເກັງ, ລົດກະບະ, ລົດຕູ້ 25 ບ່ອນນັ່ງລົງມາ ແລະ ລົດຈັກແມ່ນຈະບໍ່ໄດ້ ຮັບນະໂຍບາຍສົ່ງເສີມ ແລະ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ສຳລັບຜະລິດຕະພັນ ທີ່ພາຍ ໃນສາມາດຜະລິດໄດ້ ໃຫ້ນຳໃຊ້ຜະລິດຕະພັນພາຍໃນ, ຖ້າວິສາຫະກິດຕ້ອງການນຳ ເຂົ້າ ແມ່ນຈະບໍ່ໄດ້ຮັບນະໂຍບາຍ ສົ່ງເສີມ ແລະ ໃຫ້ປະຕິບັດຕາມກົດໝາຍ ແລະ ບຽບການທີ່ກ່ຽວຂ້ອງ, ກໍລະນີຜະລິດຕະພັນທີ່ພາຍໃນຜະລິດໄດ້ ແຕ່ບໍ່ ໄດ້ມາດຕະຖານເຕັກນິກການກໍ່ສ້າງ ຫຼື ການຜະລິດໄດ້ນັ້ນແມ່ນໃຫ້ພິຈາລະນາ ແລະ ໃຫ້ນຳສະເໜີຂໍອະນຸມັດຈາກກອງ ປະຊຸມຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງຕາມແຕ່ລະກໍລະນີ.

ຜູ້ລົງທຶນ ທີ່ລົງທຶນຢູ່ ສ ປປ ລາວ ນອກຈາກໄດ້ຮັບນະໂຍບາຍ ດ້ານອາກອນກຳໄລແລ້ວ ຍັງໄດ້ຮັບນະໂຍບາຍ ດ້ານພາສີ ແລະ ອາກອນມູນຄ່າເພີ່ມອີກເຊັ່ນ:

1) ການນຳເຂົ້າວັດຖຸອຸປະກອນ ທີ່ບໍ່ສາມາດສະໜອງ ຫຼື ຜະລິດໄດ້ ສປປ ລາວ ເພື່ອສ້າງເປັນຊັບສົມບັດຄົງທີ່ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດໂດຍກົງ ຈະໄດ້ຮັບການຍົກເວັ້ນພາສີ ແລະ ສ່ວຍສາອາກອນມູນຄ່າເພີ່ມ ໃນ ອັດຕາ **0%**, ສ່ວນການນຳເຂົ້ານ້ຳມັນເຊື້ອໄຟ, ອາຍແກັສ, ນ້ຳມັນຫຼໍ່ລື່ນ, ພາຫະນະຮັບໃຊ້ບໍລິຫານ ແລະ ວັດຖຸປະ ກອນອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.ສຳລັບການນຳເຂົ້າຊົ່ວຄາວ ພາຫະນະກົນຈັກ ຕ້ອງໄດ້ປະຕິບັດຕາມ ກົດໝາຍວ່າດ້ວຍພາສີ;

2) ການນຳເຂົ້າວັດຖຸດິບ, ວັດຖຸປະກອບ ແລະ ຊິ້ນສ່ວນປະກອບທີ່ຮັບໃຊ້ການຜະລິດທີ່ສົ່ງອອກຈະໄດ້ງົດ ເກັບພາສີໃນ ເວລານຳເຂົ້າ ແລະ ຍົກເວັ້ນພາສີ ໃນເວລາສົ່ງອອກ ແລະ ເສຍອາກອນມູນຄ່າເພີ່ມໃນອັດຕາ 0%;

3) ການນຳໃຊ້ວັດຖຸດິບພາຍໃນ ທີ່ບໍ່ແມ່ນຊັບພະຍາກອນທຳມະຊາດ ເພື່ອຜະລິດເປັນຜະລິດຕະພັນສຳເລັດ ຮູບ ແລະ ເຄິ່ງສຳເລັດຮູບ ເພື່ອສົ່ງອອກໃຫ້ເສຍອາກອນມູນຄ່າເພີ່ມໃນອັດຕາ 0%.

**<u>ໃສ່ໃຈ:</u>** ລັດຖະບານເປັນຜູ້ກຳນົດບັນຊີລາຍການຜະລິດຕະພັນເຄິ່ງສຳເລັດຮູບເພື່ອສົ່ງອອກ.

ສ່ວນນະໂຍບາຍດ້ານພາສີ, ອາກອນອື່ນໆ ໃຫ້ເບິ່ງໃນກົດໝາຍສົ່ງເສີມການລົງທຶນປີ 2016[7] ແລະ ຄຳແນະນຳຂອງກະຊວງການເງິນກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກອນຊິມໃຊ້[8].

ວິສາຫະກິດທີ່ລົງທຶນຢູ່ ສປປ ລາວ ມີຈຸດປະສົງສະເໜີຂໍນະໂຍບາຍ ຕ້ອງມີເງື່ອນໄຂດັ່ງນີ້:

1) ຕ້ອງເປັນນິຕິບຸກຄົນ ;

2) ວິສາຫະກິດນັ້ນ ຕ້ອງນອນໃນກິດຈະການສົ່ງເສີມການລົງທຶນ ຕາມກົດໝາຍວ່າດ້ວນການສົ່ງເສີມການລົງທຶນ;

3) ຕ້ອງມີການລົງທຶນຢ່າງໜ້ອຍ 1,2 ຕື້ກີບ ຫຼື ມີການນຳໃຊ້ວິຊາການລາວ ແຕ່ 30 ຄົນ ຫຼື ມີການນຳໃຊ້ແຮງງານລາວ ທີ່ມີສັນຍາແຮງງານຢ່າງຕໍ່າ 1 ປີ ແຕ່ 50 ຄົນຂື້ນໄປ;

4) ຕ້ອງດຳເນີນທຸລະກິດປົກກະຕິ ແລະ ປະຕິບັດພັນທະພາສີ-ອາກອນຕາມກົດໝາຍ ແລະ ລະບຽບການ ໂດຍມີໃບຢັ້ງຢືນການເສຍພັນທະອາກອນປະຈຳປີ.

**ຕົວຢ່າງ:** ນະໂຍບາຍດ້ານພາສີ-ອາກອນ ຕໍ່ກັບເຂດເສດຖະກິພິເສດ ສະຫວັນ-ເຊໂນ:

+ ຍົກເວັ້ນພາສີ-ອາກອນ ວັດສະດຸອຸປະກອນ, ວັດຖຸດິບທີ່ນຳໃຊ້ເຂົ້າໃນການດຳເນີນການເຄື່ອນໄຫວທຸລະກິດ ແລະ ການຜະລິດແມ່ນຖືກງົດເກັບທາງດ້ານພາສີ ;

+ ຍົກວັ້ນອາກອນມູນຄ່າເພີ່ມສຳລັບການນຳວັດຖຸດິບພາຍໃນເພື່ອປຸງແຕ່ງ ແລະ ທຳການຜະລິດເພື່ອສົ່ງອອກ;

+ ຍົກເວັ້ນພາສີ-ອາກອນສຳລັບສິນຄ້າສົ່ງອອກຕ່າງປະເທດ.

**+ ນະໂຍບາຍດ້ານທີ່ດິນ**

ຜູ້ລົງທຶນຕ່າງປະເທດ ທີ່ມາລົງທຶນໃນໂຄງການທີ່ມີທຶນຈົດທະບຽນ ມີສິດນຳໃຊ້ທີ່ດິນຈາກລັດທີ່ໄດ້ມີການກຳນົດຈັດສັນ ຕາມກຳນົດເວລາຂອງການລົງທຶນ ເພື່ອປຸກສ້າງສິ່ງຕ່າງໆ ເປັນທີ່ຢູ່ອາໄສ ຫຼື ສະຖານທີ່ດຳນີນທຸລະກິດ ດ້ວຍການຕົກລົງຂອງອົງການປົກຄອງທ້ອງຖິ່ນຕາມລະບຽບການ ລັດຖະບານເປັນຜູ້ກຳນົດລະບຽບການ, ກົນໄກການແບ່ງຂັ້ນຄຸ້ມຄອງ ກ່ຽວກັບການສົ່ງເສີມດ້ວຍສິດນຳໃຊ້ທີ່ດິນຂອງຜູ້ລົງທຶນຕ່າງປະເທດ.

---

[7] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທີII , ໝວດທີ1, ມາດຕາ 14

[8] ຄຳແນະນຳຂອງກະຊວງການເງິນ, ສະບັບເລກທີ 0394/ກງ, ລົງວັນທີ 04 ກຸມພາ 2022 ກ່ຽວກັບກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍກອນຊິມໃຊ້.

ການສົ່ງເສີມດ້ານທີ່ດິນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສົ່ງເສີມການລົງທຶນ[9] ໝາຍເຖິງການໃຫ້ນະໂຍບາຍ ຍົກເວັ້ນການເກັບຄ່າເຊົ່າ ຫຼື ຄ່າສຳປະທານທີ່ດິນຂອງລັດຕາມເຂດສົ່ງເສີມທີ່ແຕກຕ່າງກັນ ແລະ ນະໂຍບາຍສົ່ງເສີມ ດ້ານການນຳໃຊ້ທີ່ດິນ.

**ຕົວຢ່າງ:** ນະໂຍບາຍດ້ານທີ່ດິນຕໍ່ກັບເຂດເສດຖະກິດພິເສດ ສະຫວັນ-ເຊໂນ:

+ ຜູ້ລົງທຶນສາມາດເຊົ່າທີ່ດິນຢູ່ໃນ ຂສສຊ ໄດ້ເຖິງ 75 ປີ ແລະ ສາມາດຕໍ່ໄດ້ ;

+ ໃນຊ່ວງອາຍຸການເຊົ່ານີ້ ຜູ້ເຊົ່າສາມາດໂອນທີ່ດິນໃຫ້ແກ່ບຸກຄົນທີສາມໄດ້ ;

+ ຖ້າເຊົ່າແຕ່ 30 ປີຂຶ້ນໄປ ແມ່ນຍົກເວັ້ນຄ່າເຊົ່າ 12 ປີ.

**References:**


1. ລັດຖະທຳມະນູນຖະທຳມະນູນແຫ່ງ ສປປ ລາວປີ 2015;
2. ກົດໝາຍສົ່ງເສີມການລົງທຶນ 2016;
3. ບົດແນະນຳ ຂອງຄະນະກຳມະການສົ່ງເສີມການລົງທຶນ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ສະບັບເລກທີ 01/ຄລທ.ສ, ລົງວັນທີ 02 ມັງກອນ 2019 ວ່າດ້ວຍການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີອາກອນ ແລະ ອາກອນມູນຄ່າເພີ່ມ ສຳລັບແຜນນຳເຂົ້າຂອງວິສາຫະກິດ;
4. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;
5. ຄຳແນະນຳຂອງກະຊວງການເງິນ, ສະບັບເລກທີ 0394/ກງ, ລົງວັນທີ 04 ກຸມພາ 2022 ກ່ຽວກັບກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກອນຊົມໃຊ້.


[9] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກ II, ມາດຕາ, ໝວດ1 , ມາດຕາ15-16